**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເລກທີ: 04 /ສພທ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ: 18/03/2021

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມວິສາມັນ

## ວັນທີ 18/03/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ຄັ້ງທີ 2 ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 13:30 ໂມງ ວັນທີ 18/03/2021 ທີ່ ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ ຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສຳຄັນ ດັ່ງນີ້:**

1. ກອງປະຊຸມ ໄດ້ໃຫ້ທິດຊີ້ນຳ ກ່ຽວກັບ ການຄຸ້ມຄອງສິນເຊື່ອ ຂອງ ທຄຕລ ແລະ ຮັບຮອງການອະນຸມັດສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່ຈຳນວນ 5 ລາຍການ.
2. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງການກະກຽມກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020 ດັ່ງນີ້:
   - **ເວລາປະຊຸມ: 14:00 ໂມງ** ຂອງວັນທີ **30 ເມສາ 2021;**
   - **ສະຖານທີ່: ໂຮງແຮມເມືອງແທ່ງ, ນະຄອນຫຼວງວຽງຈັນ**
   - ວັນທີ **01/04/2021** ເປັນມື້ປິດປຶ້ມ ເພື່ອກຳນົດສິດຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2020;
   - ວັນທີ **29/04/2021** ເປັນມື້ປິດປຶ້ມ ເພື່ອກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນປະຈຳປີ 2020;
   - **ມື້ຈ່າຍເງິນປັນຜົນ**: **18/05/2021** ເປັນມື້ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ;

**ປະທານສະພາບໍລິຫານ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ